ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------====000====----------

# ບົດບັນທຶກ

## ກອງປະຊຸມຄະນະຮັບຜິດຊອບວິຊາການ (TWG) ພາຍໃຕ້ແຜນງານ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT)

## (ຄັ້ງວັນທີ 15 ທັນວາ 2016 ທີ່ນະຄອນຫຼວງວຽງຈັນ)

ໃນວັນທີ 15 ທັນວາ 2016, ເວລາ 8:00 ໂມງ ໄດ້ມີການຈັດກອງປະຊຸມຄະນະຮັບຜິດຊອບວິຊາການ (TWG) ພາຍໃຕ້ແຜນງານ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ຂຶ້ນ ທີ່ຫ້ອງປະຊຸມ ໂຮງແຮມເມີຄິວ (Mecure) ນະຄອນຫຼວງວຽງຈັນ, ກອງປະຊຸມຄັ້ງນີ້ ໄດ້ຮັບກຽດການເປັນປະທານໂດຍ ທ່ານ ຄຳພຸດ ພັນດານຸວົງ, ຫົວໜ້າກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ໃນນາມ ຫົວໜ້າຄະນະຮັບຜິດຊອບຊຸກຍູ້ເຈລະຈາ ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມການຄ້າໄມ້ແບບສະໝັກໃຈ (VPA) ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ ແລະ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້. ກອງປະຊຸມຄັ້ງນີ້ ຍັງມີບັນດາຜູ້ເຂົ້າຮ່ວມຈາກ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຈຳນວນ 51 ທ່ານ (ຍິງ 7 ທ່ານ), ລາຍລະອຽດມີໃບລົງທະບຽນລາຍຊື່ຜູ້ເຂົ້າຮ່ວມກອງ ປະຊຸມຄັດຕິດມາພ້ອມນີ້.

ຈຸດປະສົງຂອງກອງປະຊຸມ ແມ່ນຮັບຟັງການນຳສະເໜີ ກ່ຽວກັບ ຄວາມຄືບໜ້າດ້ານວິຊາການ ໃນຂະບວນການຈັດຕັ້ງປະຕິບັດວຽກງານ FLEGT VPA ໃນໄລຍະນີ້ ເພື່ອໃຫ້ມີການແລກປ່ຽນຂໍ້ມູນປຶກສາຫາລື ກ່ຽວກັບ ການກຳນົດໜ້າວຽກ, ການປັບປຸງວຽກງານທີ່ຍັງຄ້າງຄາ ແລະ ຕົກລົງລາຍການແຜນວຽກກິດຈະກຳລະອຽດ ຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງ ນຳໄປເປັນບ່ອນອີງທາງດ້ານວິຊາການ ປະກອບສ່ວນເຂົ້າໃນ ຂະບວນການຈັດຕັ້ງປະຕິບັດແຜນງານ FLEGT VPA ຂອງ ສປປ ລາວ ໂດຍມີການນຳສະເໜີແຕ່ລະຫົວຂໍ້ສຳຄັນຈາກບັນດາພາກສ່ວນທີ່ກ່ຽວຂ້ອງ ດັ່ງລຸ່ມນີ້:

1. ຄວາມຄືບໜ້າ ໃນການພັດທະນາຄຳນິຍາມໄມ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ແຜນເຈລະຈາ ຊ່ອງໜ້າຄັ້ງທຳອິດ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ ໃນແຜນງານ FLEGT VPA;
2. ຮ່າງນິຍາມໄມ້ຖືກຕ້ອງຕາມລະບຽບກົດໝາຍສະບັບທຳອິດ ກ່ຽວກັບ ໄມ້ຈາກເຂດຫັນປ່ຽນທີ່ດິນປ່າໄມ້ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍພັດທະນາ;
3. ຮ່າງນິຍາມໄມ້ຖືກຕ້ອງຕາມລະບຽບກົດໝາຍສະບັບທຳອິດ ກ່ຽວກັບ ລະບຽບການໃນຂະແໜງການປຸງແຕ່ງໄມ້ ແລະ ການຄ້າໄມ້;
4. ຂອບເຂດຜະລິດຕະພັນໄມ້;
5. ການສ້າງເອກະສານຊ້ອນທ້າຍຂອງ ລະບົບການຄວບຄຸມຕ່ອງໂສ້ການສະໜອງໄມ້ (TLAS);
6. ລາຍງານການ ເຂົ້າຮ່ວມຝຶກອົບຮົມລະດັບພາກພື້ນ ໃນລະບົບຄ້ຳປະກັນໄມ້ທີ່ຖືກຕ້ອງຕາມກົດໝາຍ (TLAS) ຂອງຂະບວນການ FLEGT VPA ທີ່ເມືອງຈັກກາຕາ ປະເທດ ອິນໂດເນເຊຍ ໃນຕົ້ນເດືອນ 12 ປີ 2016.

ຜ່ານການປຶກສາຫາລືໃນກອງປະຊຸມສາມາດສະຫລຸບສັງລວມໄດ້ບັນຫາສຳຄັນ ດັ່ງລຸ່ມນີ້:

1. ໃຫ້ຄະນະຮັບຜິດຊອບທີ່ກ່ຽວຂ້ອງຮີບຮ້ອນສ້າງຕັ້ງກຸ່ມຊ່ຽວຊານສະເພາະດ້ານ ກ່ຽວກັບ ໄມ້ຈາກເຂດຫັນປ່ຽນທີ່ດິນປ່າໄມ້ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍການພັດທະນາ ແລະ ກຸ່ມຊ່ຽວຊານສະເພາະດ້ານ ໃນຂະບວນການປຸງແຕ່ງໄມ້ ແລະ ການຄ້າໄມ້ ເພື່ອຈັດກອງປະຊຸມຄົ້ນຄວ້າລະອຽດໃຫ້ແທດເໝາະກັບຕົວຈິງ ໂດຍ ປະສານກັບຂະແໜງ ການພາກລັດທີ່ກ່ຽວຂ້ອງ, ສະພາແຫ່ງຊາດ, ມະຫາວິທະຍາໄລແຫ່ງຊາດ, ແຂວງ ທົດລອງ, ພາກທຸລະກິດ ແລະ ອົງການຈັດຕັ້ງທາງສັງຄົມ. ພ້ອມດຽວກັນນັ້ນ, ກໍ່ໃຫ້ປະສານກັບໂຄງການ ProFLEGT ທາງດ້ານງົບປະມານ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດການຄົ້ນຄວ້າ ຕາມຄວາມຄິດເຫັນຂອງກອງປະຊຸມ ແລະ ຕາມລະບຽບກົດໝາຍ ຂອງ ສປປ ລາວ. ສຳລັບການນຳສະເໜີເອກະສານອ້າງອີງນະຕິກຳ ຕ້ອງໃຫ້ລະບຸແຈ້ງວ່າ ຢູ່ໃນຂໍ້ໃດ? ມາດຕາໃດ? ຂອງນິຕິກຳນັ້ນໆ;
2. ສຳລັບກຸ່ມຊ່ຽວຊານສະເພາະດ້ານ ກ່ຽວກັບ ໄມ້ຈາກປ່າຜະລິດ, ປ່າປູກ, ປ່າໄມ້ບ້ານ, ແຮງງານ ກໍ່ຂໍໃຫ້ສືບຕໍ່ປັບປຸງ ຄຳນິຍາມດັ່ງກ່າວໃຫ້ເປັນສະບັບສົມບູນ ເພື່ອນຳໃຊ້ເຂົ້າໃນ ການເຈລະຈາຂະບວນການເຊັນສັນຍາ VPA ຮ່ວມກັບສະຫະພາບເອີຣົບ ຕາມແຜນການທີ່ວາງໄວ້ ໂດຍໃຫ້ປະສານຄືນກັບໂຄງການ ProFLEGT ທາງດ້ານງົບປະມານ;
3. ຂໍໃຫ້ທຸກພາກສ່ວນ ສືບຕໍ່ເຂົ້າຮ່ວມຂະບວນການຈັດຕັ້ງປະຕິບັດແຜນງານ FLEGT VPA ຢ່າງຕັ້ງໜ້າ ໃນຂະບວນການຮ່າງ, ປັບປຸງນິຍາມໄມ້ທີ່ຖືກຕ້ອງ ແຕ່ລະສະບັບ ໃຫ້ສົມບູນຂຶ້ນ ກຽມພ້ອມປ້ອງກັນ ກ່ຽວກັບ ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ ກັບ ສະຫະພາບເອີຣົບ ໃນ ເດືອນ ກຸມພາ 2017;
4. ຂໍໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ປະສານງານກັບ ຫ້ອງການປະສານງານແຜນງານ FLEGT VPA ຢູ່ ກົມກວດກາປ່າໄມ້, ກະຊວງ ກະສິກຳ ແລະ ປ່າໄມ້ ໃນວຽກງານວິຊາການ ແລະ ວຽກງານອື່ນໆທີ່ກ່ຽວຂ້ອງ ໂດຍສະເພາະແມ່ນ 3 ແຂວງທົດລອງ (ແຂວງ ໄຊຍະບູລີ, ແຂວງ ຄຳມ່ວນ ແລະ ແຂວງ ອັດຕະປື) ແລະ ບັນດາ ໂຄງການສະໜັບສະໜູນທີ່ໄດ້ຈາກບັນດາອົງການຈັດຕັ້ງສາກົນເຊັ່ນ: EU, FAO FLEGT, EU FERN ແລະ ອື່ນໆ ເພື່ອໃຫ້ໄປລວງດຽວກັນ ປະກອບສ່ວນຮັບໃຊ້ແຜນງານ FLEGT VPA ແລະ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ ແລະ ນະໂຍບາຍຂອງລັດຖະບານແຫ່ງ ສປປ ລາວ.

ກອງປະຊຸມຄະນະຮັບຜິດຊອບເຮັດວຽກດ້ານວິຊາການ (TWG) ພາຍໃຕ້ແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ໄດ້ປິດລົງເວລາ 16:30 ຂອງວັນດຽວກັນ ດ້ວຍບັນຍາກາດອັນຈົບງາມ ແລະ ມີຄວາມເປັນເອກະພາບສູງ.

ດັ່ງນັ້ນ, ຈຶ່ງໄດ້ເຮັດບົດບັນທຶກສະບັບນີ້ໄວ້ ເພື່ອເປັນບ່ອນອີງ ໃຫ້ແກ່ແຕ່ລະພາກສ່ວນທີ່ກ່ຽວຂ້ອງນຳໄປຈັດຕັ້ງປະຕິບັດ.

| | |
|---|---|
| ປະທານກອງປະຊຸມ | ຜູ້ບັນທຶກກອງປະຊຸມ |
| ທ່ານຫົວໜ້າກົມກວດກາປ່າໄມ້ | ຜູ້ຕາງໜ້າຄະນະປະສານງານວິຊາການ (TWG) |
| ຄຳພູດ ພັນດານຸວົງ | ຄຳພອນ ບຸນທະວີ |

ສະບັບຮ່າງທີ 1: 29-11-2016

## ມາດຕະຖານນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ 2: ໄມ້ຈາກເຂດຫັນປ່ຽນທີ່ດິນປ່າໄມ້ ເພື່ອນໍາໃຊ້ເຂົ້າໃນເປົ້າໝາຍການພັດທະນາ

<table>
<tr><td colspan="3">ຫຼັກການ 2.1 ການຫັນປ່ຽນທີ່ດິນປ່າໄມ້ ເພື່ອນໍາໃຊ້ເຂົ້າໃນເປົ້າໝາຍການພັດທະນາ</td></tr>
<tr><td colspan="3">ມາດຖານ 2.1.1 ການຫັນປ່ຽນທີ່ດິນປ່າໄມ້ ຕ້ອງໄດ້ຮັບການອະນຸມັດ ຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການ</td></tr>
<tr><td>ຕົວຊີ້ບອກ 2.1.1.1 ການຫັນປ່ຽນທີ່ດິນປ່າໄມ້ ຕ້ອງດໍາເນີນ ຢູ່ພາຍໃນພື້ນທີ່ ສັນຍາສໍາປະທານ ຫຼື ບົດສະເໜີໂຄງການ ທີ່ລັດຖະບານ ຫຼື ອົງການຈັດຕັ້ງຂອງລັດ ແຕ່ລະຂັ້ນໄດ້ອະນຸມັດໃຫ້ ເທົ່ານັ້ນ.</td><td colspan="2">ຕົວຢັ້ງຢືນ:<br>• ສັນຍາສໍາປະທານ ໃນການນໍາໃຊ້ທີ່ດິນປ່າໄມ້ ເພື່ອ ນໍາໃຊ້ເຂົ້າໃນເປົ້າໝາຍການພັດທະນາ.<br>• ໃບອະນຸມັດ ບົດສະເໜີໂຄງການ</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກໍາ:</u><br>• ກົດໝາຍ ສະບັບເລກທີ. 08/ສພຊ. ພະຈິກ 2009<br>• ກົດໝາຍ ສະບັບເລກທີ 02/ສພຊ, ກໍລະກົດ 2009<br>• ດໍາລັດ ສະບັບເລກທີ 119/ນຍ. 2011.</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ຂະແໜງ ແຜນການ ແລະ ການລົງທຶນ<br>• ຂະແໜງການທີ່ກ່ຽວຂ້ອງ</td><td>ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານ<br>• ສໍາພາດພະນັກງານທີ່ກ່ຽວຂ້ອງ<br>• ລົງກວດກາ ໃນພາກສະໜາມ</td></tr>
</table>

<table>
<tr>
<td>ຕົວຊີ້ບອກ 2.1.1.2 ການຫັນປ່ຽນທີ່ດິນປ່າໄມ້ ເພື່ອນໍາໃຊ້ເຂົ້າໃນເປົ້າໝາຍການພັດທະນາ ໄດ້ຮັບການອະນຸມັດ ຈາກຂະແໜງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ.</td>
<td colspan="2">ຕົວຢັ້ງຢືນ:<br>• ເອກະສານອະນຸມັດ ການຫັນປ່ຽນ ທີ່ດິນປ່າໄມ້ ທີ່ອອກໂດຍໃຫ້ໂດຍ ຈາກຂະແໜງ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ</td>
</tr>
<tr>
<td>ເອກະສານອ້າງອີງດ້ານນິຕິກໍາ:<br>• ກົດໝາຍ ສະບັບເລກທີ 04/ສພຊ 2003 (14)<br>• ດໍາລັດ ສະບັບເລກທີ 88/ນຍ 2008 (19)</td>
<td>ອົງການຈັດຕັ້ງຮັບຜິດຊອບ<br>• ຂະແໜງ ຊັບພະຍາ ກອນ ທໍາມະຊາດ ແລະ ສິ່ງແວດລ້ອມ</td>
<td>ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານ<br>• ສໍາພາດພະນັກງານທີ່ກ່ຽວຂ້ອງ<br>• ລົງກວດກາໃນພາກສະໜາມ</td>
</tr>
<tr>
<td colspan="3">ຫຼັກການ 2.2 ການວາງແຜນ ດໍາເນີນການຂຸດຄົ້ນໄມ້</td>
</tr>
<tr>
<td colspan="3">ມາດຖານ 2.2.1 ການໝາຍເຂດແດນ ໃນການຂຸດຄົ້ນໄມ້ ໄດ້ປະຕິບັດລະບຽບການທີ່ກ່ຽວຂ້ອງ</td>
</tr>
<tr>
<td>ຕົວຊີ້ບອກ 2.2.1.1 ໄດ້ກໍານົດຂອບເຂດແດນລະອຽດ ໃນເຂດຫັນປ່ຽນທີ່ດິນປ່າໄມ້ ເພື່ອນໍາໃຊ້ເຂົ້າໃນເປົ້າໝາຍການພັດທະນາ ຕ້ອງມີຫຼັກໝາຍໃນພາກສະໜາມ , ມີການໝາຍຂອບເຂດແດນ ໃນແຜນທີ່ ທີ່ໄດ້ແບ່ງພື້ນທີ່ເປັນຄຸ້ມຂຸດຄົ້ນ ຕາມລັກສະນະພູມສັນຖານຕົວຈິງ ແລະ ມີການໝາຍ ໃນພາບຖ່າຍທາງອາກາດ ພ້ອມຈຸດພິກັດ GPS ທີ່ໄດ້ເຊັນຮັບຮອງ ຈາກກົມປ່າໄມ້.<br>ຕົວຢ່າງ:<br>• ການຂຸດຄົ້ນໄມ້ຕົວຈິງບາງບ່ອນແມ່ນອອກນອກຂອບເຂດສໍາປະທານ<br>• ພາບຖ່າຍທາງອາກາດທີ່ໃນການນໍາໃຊ້ ຍັງບໍ່ທັນຊັດເຈນ<br>• ການປັກຫຼັກໝາຍຍັງບໍ່ຈະແຈ້ງ<br>• ເຮັດໃຫ້ມີການຂຸດຄົ້ນກາຍຂອບເຂດ ແລະ ສ້າງຜົນກະທົບຕໍ່ກັບຊັບພະຍາກອນປ່າໄມ້ ຈໍານວນໜຶ່ງ</td>
<td colspan="2">ຕົວຢັ້ງຢືນ:<br>• ຫຼັກໝາຍ ໃນພື້ນທີ່ຕົວຈິງ ໂດຍອີງໃສ່ເຂດແດນຂອງພື້ນທີ່<br>• ແຜນທີ່ລະອຽດ ທີ່ສະແດງຂອບເຂດຕົວຈິງ ໃນມາດຕາສ່ວນ1:50.000 ແລະ 1:10.000<br>• ພາບຖ່າຍທາງອາກາດ ພ້ອມດ້ວຍ ຈຸດພິກັດ GPS<br>ຕົວຢ່າງ:<br>- ມີຫຼັກໝາຍທີ່ແນ່ນອນ<br>- ແຜນທີ່ລະອຽດ ຕາມມາດຕາສ່ວນ ລະບຽບການ 0112<br>- ພາບຖ່າຍທາງອາກາດ ຕ້ອງມີ ໃຫ້ເຫັນພື້ນທີ່ຕົວຈິງ</td>
</tr>
</table>

<table>
<tr>
<td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ລະບຽບການ ເລກທີ 0112/ກປ, ພະຈິກ 2008 (ມາດຕາ 7)<br>• ລະບຽບການໃໝ່ ກ່ຽວກັບ ການຂຸດຄົ້ນໄມ້ ໃນເຂດທັບປ່ຽນທີ່ດິນປ່າໄມ້ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍການພັດທະນາ (ຊ່ອງຫວ່າງ)<br><br>- ມີຊ່ອງຫວ່າງ ດ້ານລະບຽບການໃນການຂຸດຄົ້ນໄມ້ ໃນບາງໂຄງການ</td>
<td>ອົງການຈັດຕັ້ງຮັບຜິດຊອບ<br>• ກົມປ່າໄມ້<br>ກອງສຳຫຼວດ ແລະ ວາງແຜນປ່າໄມ້</td>
<td>ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານ (ເອກະສານຫຼັກໝາຍ, ແຜນທີ່, ພາບຖ່າຍ)<br>• ສຳພາດພະນັກງານທີ່ກ່ຽວຂ້ອງ (ກົມປ່າໄມ້, ກປຂ, ຫປມ)<br>• ລົງກວດກາໃນພາກສະໜາມ (ພື້ນທີ່ຕົວຈິງ)</td>
</tr>
<tr>
<td>ຕົວຊີ້ບອກ 2.2.1.2 ໄດ້ດຳເນີນການສຳຫຼວດປ່າໄມ້ ແລະ ຄິດໄລ່ ບໍລິມາດໄມ້ຢືນຕົ້ນ ລວມທັງ ບັນທຶກຊະນິດພັນໄມ້ ແລະ ໄດ້ສ້າງແຜນການຂຸດຄົ້ນໄມ້ປະຈຳປີຂອງແຂວງ ໃນເຂດທັບປ່ຽນທີ່ດິນປ່າໄມ້ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍການພັດທະນາ.<br><u>ຕົວຢ່າງ:</u><br>- ການສຳຫຼວດ 100% ວັດແທກໄມ້ ໜ້າຕ້າງ 15 ຊມ ຂຶ້ນເມືອ<br>- ມີນິຕິກຳ ແຕ່ຈັດຕັ້ງປະຕິບັດຍັງບໍ່ໄດ້ດີ ແລະ ມີຄ່າໃຊ້ຈ່າຍສູງ<br>- ການຕັດໄມ້ແຕ່ຕົ້ນທີ່ມີລາຄາແພງ ເຮັດໃຫ້ບໍລິມາດໄມ້ບໍ່ເຖິງໂກຕ້າ (ຊ່ອງວ່າງ - ສັນຍາຕ້ອງຮັດກຸມ ໃນອານາຄົດ)<br>- ກຳລັງປັບປຸງນິຕິກຳ</td>
<td colspan="2">ຕົວຢັ້ງຢືນ:<br>• ບົດລາຍງານການສຳຫຼວດ ເຊິ່ງລວມມີ ບໍລິມາດໄມ້ຢືນຕົ້ນ ແລະ ຊະນິດພັນໄມ້<br>• ແຜນການຂຸດຄົ້ນໄມ້ປະຈຳປີຂອງແຂວງ<br><u>ຕົວຢ່າງ:</u><br>- ຍ້ອນງົບປະມານຈຳກັດ ອາດຈະຫຼຸດເປີເຊັນການສຳຫຼວດລົງ ໃນບົດລາຍງານການສຳຫຼວດ</td>
</tr>
</table>

<table>
<tr>
<td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ກົດໝາຍວ່າດ້ວຍປ່າໄມ້ ເລກທີ.06/ສພຊ. ທັນວາ 2007 (ມາດຕາ 18)<br>• ຂໍ້ຕົກລົງ ເລກທີ. 0108/ກປ 2005<br>• ດຳລັດ ເລກທີ 32/ນຍ 2012 5.1<br>• ຄຳສັ່ງ ເລກທີ 17/ນຍ 2008 ມາດຕາ 14<br>• ລະບຽບການ ເລກທີ 0221/ກປ 2000<br>• ລະບຽບການໃໝ່ ກ່ຽວກັບ ເຂດທັນປ່ຽນທີ່ດິນປ່າໄມ້ ເພື່ອ ນຳໃຊ້ເຂົ້າໃນເປົ້າໝາຍການພັດທະນາ (ຮ່ອງຫວ່າງ) ອາດກວມເອົາ ເຂດທັນປ່ຽນທີ່ດິນປ່າໄມ້ ຂອງໂຄງການຕ່າງໆເຂົ້າກັນ.</td>
<td>ອົງການຈັດຕັ້ງຮັບຜິດຊອບ<br>• ກົມປ່າໄມ້<br>• ພະແນກກະສິກຳແລະປ່າໄມ້ ແຂວງ<br>• ຫ້ອງການ ກະສິກຳແລະປ່າໄມ້ເມືອງ</td>
<td>ວິທີກວດກາຢັ້ງຢືນ<br>• ທົບທວນ ເອກະສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ<br>• ລົງກວດກາໃນພາກສະໜາມ</td>
</tr>
<tr>
<td colspan="3">ຫຼັກການ 2.3 ການຂຸດຄົ້ນໄມ້ ໃນເຂດທັນປ່ຽນທີ່ດິນປ່າໄມ້ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍການພັດທະນາ</td>
</tr>
<tr>
<td colspan="3">ມາດຖານ 2.3.1 ການດຳເນີນການຂຸດຄົ້ນໄມ້ ໃນເຂດທັນປ່ຽນທີ່ດິນປ່າໄມ້ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍການພັດທະນາ ຕ້ອງໄດ້ຮັບອະນຸມັດ ຕາມກົດໝາຍ ແລະ ລະບຽບການ</td>
</tr>
<tr>
<td>ຕົວຊີ້ບອກ 2.3.1.1 ການດຳເນີນ ການຂຸດຄົ້ນໄມ້ ໃນເຂດທັນປ່ຽນທີ່ດິນປ່າໄມ້ ເພື່ອນຳໃຊ້ເຂົ້າໃນເປົ້າໝາຍການພັດທະນາ ຕ້ອງນອນຢູ່ໃນແຜນການຂຸດຄົ້ນໄມ້ປະຈຳປີຂອງແຂວງ ທີ່ໄດ້ອະນຸມັດ ຈາກລັດຖະບານ ແລະ ຮັບຮອງຈາກສະພາແຫ່ງຊາດ.<br><u>ຕົວຢ່າງ:</u><br>- ຢາກໃຫ້ມີເອກະສານອະນຸມັດ ແລະ ຮັບຮອງທີ່ຖືກຕ້ອງ ເພື່ອປ້ອງກັນການຂຸດຄົ້ນໄມ້ທີ່ບໍ່ເກີນໂກຕ້າ</td>
<td colspan="2">ຕົວຢັ້ງຢືນ:<br>• ບົດສະເໜີ ຂໍອະນຸມັດ ແຜນການຂຸດຄົ້ນໄມ້ປະຈຳປີຂອງແຂວງ<br>• ໜັງສື ອະນຸມັດ ຈາກລັດຖະບານ<br>• ໜັງສື ຮັບຮອງຈາກ ສະພາແຫ່ງຊາດ<br>• ໃບແຈ້ງການແຜນການຂຸດຄົ້ນໄມ້ປະຈຳປີ ຂອງກະຊວງກະສິກຳ ແລະປ່າໄມ້.</td>
</tr>
<tr>
<td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ຄຳສັ່ງ ເລກທີ 17/ນຍ. ກັນຍາ 2008</td>
<td>ອົງການຈັດຕັ້ງຮັບຜິດຊອບ</td>
<td>ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານ</td>
</tr>
</table>

| | | |
|---|---|---|
| • ລະບຽບການ ເລກທີ 0204/ກປ. ຕຸລາ 2003 (ມາດຕາ 13 ແລະ 20)<br>• ຄຳສັ່ງແນະນຳ ເລກທີ 0105/ກປ. ພະຈິກ 2008. | • ກະຊວງ ກະສິກຳ ແລະ ປ່າໄມ້<br>• ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ | • ສຳພາດພະນັກງານທີ່ກ່ຽວຂ້ອງ<br>• ລົງກວດກາໃນພາກສະໜາມ |
| ມາດຖານ 2.3.2 ການດຳເນີນການຂຸດຄົ້ນໄມ້ຕ້ອງປະຕິບັດຕາມ ຂັ້ນຕອນການຂຸດຄົ້ນ | | |
| **ຕົວຊີ້ບອກ 2.3.2.1** ຜູ້ປະກອບການຂຸດຄົ້ນໄມ້ ມີສັນຍາການຂຸດຄົ້ນໄມ້ ແລະ ມີໃບອະນຸຍາດການຂຸດຄົ້ນໄມ້ ທີ່ໄດ້ອອກໃຫ້ໂດຍ ພະແນກກະສິກຳ ແລະປ່າໄມ້ແຂວງ.<br>ຕົວຢ່າງ:<br>- ຄຳສັ່ງ ເລກທີ 15/ນຍ | ຕົວຢັ້ງຢືນ:<br>• ໃບອະນຸຍາດຂຸດຄົ້ນໄມ້ ທີ່ອອກໃຫ້ໂດຍ ພະແນກກະສິກຳ ແລະ ປ່າໄມ້ແຂວງ<br>• ເອກະສານສັນຍາການຂຸດຄົ້ນໄມ້ ທີ່ເຊັນ ລະຫວ່າງ ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ບໍລິສັດຜູ້ຮັບເໝົາຂຸດຄົ້ນ | |
| ເອກະສານອ້າງອີງດ້ານນິຕິກຳ:<br>• ຄຳສັ່ງເລກທີ 17/ນຍ. ກັນຍາ 2008<br>• ບົດແນະນຳ ເລກທີ 0105/ກປ. ພະຈິກ 2008<br>• ຂໍ້ຕົກລົງເລກທີ 0182/ກປ. ກຸມພາ 2009 (ມາດຕາ 6 ແລະ ມາດຕາ 7)<br>• ຂໍ້ແນະນຳ ເລກທີ 2157/ກປມ. ພະຈິກ 2006<br>• ຂໍ້ແນະນຳ ເລກທີ 1035/ກປມ, 1036/ກປ. ເມສາ2010<br>• ຄຳສັ່ງ ເລກທີ 15/ນຍ | ອົງການຈັດຕັ້ງຮັບຜິດຊອບ<br>• ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ<br>• ຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ | ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ<br>• ລົງກວດກາໃນພາກສະໜາມ |
| **ຕົວຊີ້ບອກ 2.3.2.2** ຜູ້ປະກອບການຂຸດຄົ້ນໄມ້ ໄດ້ປະຕິບັດ ການຂຸດຄົ້ນໄມ້ ຕາມຂອບເຂດພື້ນທີ່ ທີ່ໄດ້ອະນຸມັດ.<br>• ການຂຸດຄົ້ນໄມ້ຕົວຈິງ ຕ້ອງມີການກວດກາລະອຽດ<br>• ພາບ ຖ່າຍທາງອາກາດທີ່ໃນການນຳໃຊ້ ຕ້ອງລະອຽດ<br>• ການປັກຫຼັກໝາຍຕ້ອງຈະແຈ້ງ ໂດຍຫຼັກໝາຍທີ່ສາມາດກວດກາໄດ້ | ຕົວຢັ້ງຢືນ:<br>• ບັນດາຈຸດຂອບເຂດແດນ ທີ່ໝາຍຕົວຈິງໃນພາກສະໜາມ<br>• ແຜນທີ່ ຂອບເຂດແດນລະອຽດໃນ ມາດຕາສ່ວນ1:50.000 ແລະ 1:10.000 | |

<table>
<tr>
<td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ລະບຽບການ ເລກທີ 0221/ກປ. ຕຸລາ 2000 (ມາດຕາ 3-14)<br>• ຄຳແນະນຳ ເລກທີ 2157/ກປ. ພະຈິກ2006.<br>• ບົດແນະນຳ ເລກທີ 1035/ກປ, 1036/ກປ. ເມສາ 2010.</td>
<td>ອົງການຈັດຕັ້ງຮັບຜິດຊອບ<br>• ພະແນກ ກະສິກຳ ແລະ ປ່າໄມ້ແຂວງ<br>• ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ</td>
<td>ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ, ປະຊາຊົນໃນເຂດຂຸດຄົ້ນໄມ້<br>• ລົງກວດກາໃນພາກສະໜາມ</td>
</tr>
<tr>
<td>ຕົວຊີ້ບອກ 2.3.2.3 ຜູ້ປະກອບການຂຸດຄົ້ນໄມ້ ໃນເຂດທັນປ່ຽນທີ່ດິນປ່າໄມ້ ເພື່ອ ນຳໃຊ້ເຂົ້າໃນເປົ້າໝາຍການພັດທະນາ ໄດ້ປະຕິບັດຕາມ ຫຼັກການຂຸດຄົ້ນໄມ້ ໃນເຂດປ່າຜະລິດ ເຊັ່ນ:ການຕັດ, ການບັນທຶກ, ການຂົນສົ່ງ ແລະ ການຂຶ້ນບັນຊີໄມ້.<br><br>ຍັງເປັນຊ່ອງຫວ່າງ ເນື່ອງຈາກລະບຽບການ ໃນການຕິດຕາມກວດກາ ໃນການຂຸດຄົ້ນໄມ້ ໃນເຂດທັນປ່ຽນທີ່ດິນປ່າໄມ້ ເພື່ອ ນຳໃຊ້ເປັນເປົ້າໝາຍການພັດທະນາ ແມ່ນຍັງບໍ່ໄດ້ສ້າງ. ຂັ້ນຕອນ CoC (ຟອມ 1-4) ຈາກປ່າຜະລິດ ສາມາດໃຊ້ເປັນ ເອກະສານອ້າງອີງ ເພື່ອປັບເຂົ້າ ໃນການຂຸດຄົ້ນໄມ້ ຈາກ ເຂດທັນປ່ຽນທີ່ດິນປ່າໄມ້ ເພື່ອ ນຳໃຊ້ເປັນເປົ້າໝາຍການພັດທະນາ.</td>
<td colspan="2">ຕົວຢັ້ງຢືນ:<br>• ຟອມ 1 ບັນຊີໄມ້ຢືນຕົ້ນ ທີ່ໄດ້ຕັດຕົວຈິງ?<br>• ຟອມ 2 ໃບນຳສົ່ງ ຫາສະໜາມ 2?<br>• ຟອມ 3 ບັນຊີໄມ້ເຂົ້າສະໜາມ 2?<br>• ຟອມ 4 ຈັດຫຼັ່ນຄຸນນະພາບໄມ້ ໃນສະໜາມ 2?</td>
</tr>
<tr>
<td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ບາງສ່ວນຂອງ ບົດແນະນຳ ເລກທີ 0962 ຈະນຳໃຊ້ ເຂດທັນປ່ຽນທີ່ດິນປ່າໄມ້ ເພື່ອ ນຳໃຊ້ເປັນເປົ້າ ໝາຍການພັດທະນາ.<br>• ຄຳສັ່ງເລກທີ 15/ນຍ. ພຶດສະພາ 2016</td>
<td>ອົງການຈັດຕັ້ງຮັບຜິດຊອບ<br>• ພະແນກ ກະສິກຳ ແລະ ປ່າໄມ້ແຂວງ<br>• ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ</td>
<td>• ທົບທວນເອກະສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ, ປະຊາຊົນໃນເຂດຈຸດຄົ້ນໄມ້<br>• ລົງກວດກາໃນພາກສະໜາມ</td>
</tr>
</table>

<table>
<tr><td></td><td></td><td></td></tr>
<tr><td colspan="3">ຫຼັກການ 2.4 ການຂາຍໄມ້ ແລະ ການເຄື່ອນຍ້າຍໄມ້ ໄປຫາໂຮງງານປຸງແຕ່ງໄມ້</td></tr>
<tr><td colspan="3">ມາດຖານ 2.4.1 ການຂາຍໄມ້ໄດ້ ປະຕິບັດຕາມລະບຽບການຊື້-ຂາຍ ທີ່ລັດຖະບານໄດ້ກຳນົດ</td></tr>
<tr><td>ຕົວຊີ້ບອກ 2.4.1.1 ການຂາຍໄມ້ຕ້ອງໄດ້ປະຕິບັດຜ່ານຂັ້ນຕອນການປະມູນ.<br><br>(ຊ່ອງຫ່ວາງ ກ່ຽວກັບ ການປະມູນຂາຍໄມ້)</td><td colspan="2">ຕົວຢັ້ງຢືນ:<br>• ບັນຊີໄມ້ ໃນລະໜານ 2 (ຟອມ 4)<br>• ຈົດທະບຽນຂຶ້ນໄມ້ ເປັນຊັບສິນຂອງລັດ<br>• ຂໍ້ຕົກລົງແຕ່ງຕັ້ງຄະນະກຳມະການຂອງການປະມູນ<br>• ໃບແຈ້ງການເຂົ້າຮ່ວມການປະມູນ<br>• ບົດບັນທຶກການເປີດຊອງປະມູນ<br>• ໜັງສື ແຈ້ງຜົນຜູ້ຊະນະການປະມູນ<br>• ສັນຍາຊື້-ຂາຍໄມ້<br>• ໃບຢັ້ງຢືນການຈ່າຍຄ່າພັນທະໄມ້</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ລັດຖະບັນຍັດເລກທີ 003/ປປທ. ທັນວາ 2012 (ມາດຕາ 40 )<br>• ຄຳສັ່ງເລກທີ 57/ນຍ. ທັນວາ 2014<br>• ຄຳແນະນຳ ເລກທີ 3211/ກງ. ກັນຍາ 2015<br>• ແຈ້ງການ 1813/ອຄ.ກຂອ. ກັນຍາ 2015<br>• ລະບຽບການ ເລກທີ 1726/ອຄ.ກຂອ. ສິງຫາ 2012<br>• ບົດແນະນຳເລກທີ 2298/ກງ. ຕຸລາ 2004 (ທັບຊ້ອນ ກັບ ສະບັບເລກທີ 1726/ອຄ?)<br>• ຄຳສັ່ງເລກທີ 15/ນຍ. ພຶດສະພາ 2016</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ພະແນກອຸດສາຫະ ກຳ ແລະການຄ້າແຂວງ<br>• ພະແນກການເງິນແຂວງ<br>• ພະແນກກະສິກຳແລະ ປ່າໄມ້ແຂວງ</td><td>ວິທີກວດກາຢັ້ງຢືນ<br>• ກວດກາ ເອກະສານ<br>• ສຳພາດຄະນະກຳມະການປະມູນ ແລະ ປະຊາຊົນ<br>• ລົງກວດກາໃນພາກສະໜາມ</td></tr>
</table>

<table>
<tr><td colspan="3">ມາດຖານ 2.4.2 ຜູ້ຊື້ໄມ້ ໄດ້ປະຕິບັດຕາມ ລະບຽບການ ກ່ຽວກັບ ການເຄື່ອນຍ້າຍໄມ້ ຈາກ ສະໜາມໄມ້ 2 ຫາ ສະໜາມໄມ້ 3</td></tr>
<tr><td>ຕົວຊີ້ບອກ 2.4.2.1 ຜູ້ຊື້ໄມ້ຕ້ອງມີເອກະສານເຄື່ອນຍ້າຍໄມ້ຈາກພະແນກກະສິກຳ ແລະ ປ່າໄມ້ແຂວງກ່ອນດຳເນີນການເຄື່ອນຍ້າຍໄມ້.</td><td colspan="2">ຕົວຢັ້ງຢືນ:<br>• ໃບຢັ້ງຢືນການຈ່າຍຄ່າພັນທະໄມ້<br>• ໃບລົບລ້າງໄມ້ ອອກຈາກຊັບສິນຂອງລັດ<br>• ໃບອະນຸຍາດຂົນສົ່ງໄມ້ ຈາກສະໜາມ 2 -3</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ຄຳແນະນຳ ເລກທີ 2297/ກງ 2004<br>• ຄຳແນະນຳ ເລກທີ 0092/ກງ 2009<br>• ຄຳສັ່ງ ເລກທີ 57/ນຍ 2014<br>• ຄຳແນະນຳ ເລກທີ 3211/ກງ 2015<br>• ຂໍ້ຕົກລົງ ເລກທີ 1987/ກປ 2013 (8)<br>• ຂໍ້ຕົກລົງເລກທີ 0141/ກປ 2010</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ພະແນກການເງິນ ແຂວງ<br>• ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ<br>• ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ</td><td>ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານ<br>• ສຳພາດພະນັກງານທີ່ກ່ຽວ ຂ້ອງ<br>• ລົງກວດກາໃນພາກສະໜາມ</td></tr>
<tr><td colspan="3">ຫຼັກການ 2.5 ພັນທະທາງດ້ານສິ່ງແວດລ້ອມ ແລະ ສັງຄົມ</td></tr>
<tr><td colspan="3">ມາດຖານ 2.5.1 ຜູ້ປະກອບການຂຸດຄົ້ນໄມ້ ໄດ້ຕ້ອງປະຕິບັດຕາມ ພັນທະດ້ານສິ່ງແວດລ້ອມ ແລະ ສັງຄົມ ຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດ</td></tr>
<tr><td>ຕົວຊີ້ບອກ 2.5.1.1 ຜູ້ປະກອບການຂຸດຄົ້ນໄມ້ ມີ ແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ESMMP) ແລະ ມີ ເງື່ອນໄຂ ທີ່ຄັດຕິດກັບ ໃບຢັ້ງຢືນສິ່ງແວດລ້ອມ ຈາກເຈົ້າຂອງໂຄງການ ທີ່ໄດ້ຮັບ ອະນຸມັດ ແລະ ອອກໃຫ້ໂດຍ ກຊສ.</td><td colspan="2">ຕົວຢັ້ງຢືນ:<br>• ແຜນການຄຸ້ມຄອງ ແລະ ຕິດຕາມກວດກາ ສິ່ງແວດລ້ອມສັງຄົມ (ESMMP)<br>• ໃບຢັ້ງຢືນສິ່ງແວດລ້ອມ ແລະ ເງື່ອນໄຂທີ່ກ່ຽວຂ້ອງກັບການຂຸດຄົ້ນໄມ້</td></tr>
</table>

<table>
<tr><td>- ຕ້ອງມີການພິຈາລະນາ ຜົນກະທົບ ຂອງການຂຸດຄົ້ນໄມ້ ຕໍ່ສັງຄົມ ນາ ເຈົ້າຂອງໂຄງການ</td><td colspan="2"></td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ກົດໝາຍ ເລກທີ 29/ສພຊ, ທັນວາ 2012<br>• ຄຳສັ່ງແນະນຳ ເລກທີ 8029/ກຊສ. ທັນວາ 2013<br>• ຄຳສັ່ງແນະນຳ ເລກທີ 8030/ກຊສ. ທັນວາ 2013<br>• ຂໍ້ຕົກລົງ ເລກທີ 8056/ກຊສ. ທັນວາ 2013.</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ກຊສ<br>• ພຊສ<br>• ຫພຊສມ</td><td>ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານ<br>• ສຳພາດພະນັກງານທີ່ກ່ຽວ ຂ້ອງ<br>• ລົງກວດກາໃນພາກສະໜາມ</td></tr>
<tr><td>ຕົວຊີ້ບອກ 2.5.1.2 ຜູ້ດຳເນີນກິດຈະການຂຸດຄົ້ນໄມ້ ໄດ້ຈັດຕັ້ງປະຕິບັດ ບັນດາ ມາດຕະການຫຼຸດຜ່ອນຜົນກະທົບ ທີ່ກຳນົດໄວ້ໃນ ແຜນການຄຸ້ມຄອງ ແລະ ຕິດຕາມ ກວດກາ ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ESMMP) ແລະ ບັນດາເງື່ອນໄຂ ໃນໃບຢັ້ງຢືນສິ່ງແວດລ້ອມ ຂອງເຈົ້າຂອງໂຄງການ ທີ່ໄດ້ຮັບອະນຸມັດຈາກ ກຊສ.<br>- ຕ້ອງມີແຜນການດຳເນີນການຫຼຸດຜ່ອນຜົນກະທົບ ຂອງການຂຸດຄົ້ນ ໄມ້ ຕໍ່ສັງຄົມ ຕາມການປະເມີນຜົນກະທົບຂອງເຈົ້າຂອງໂຄງການ</td><td colspan="2">ຕົວຢັ້ງຢືນ:<br>• ບົດລາຍງານ ການຈັດຕັ້ງປະຕິບັດ ESMMP ຂອງຜູ້ປະກອບການຂຸດ ຄົ້ນໄມ້<br>• ບົດລາຍງານ ການຕິດຕາມກວດກາ ESMMP ຂອງ ພຊສ ຫຼື ກຊສ.</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ກົດໝາຍ ສະບັບເລກທີ 29/ສພຊ, ທັນວາ2012<br>• ຄຳສັ່ງແນະນຳ ສະບັບເລກທີ 8029/ກຊສ, ທັນວາ 2013<br>• ຄຳສັ່ງແນະນຳ ສະບັບເລກທີ 8030/ກຊສ, ທັນວາ 2013</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ກຊສ<br>• ພຊສ<br>• ຫພຊສມ</td><td>ວິທີກວດກາຢັ້ງຢືນ<br>• ທົບທວນເອກະສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ<br>• ລົງກວດກາໃນພາກສະໜາມ</td></tr>
</table>

ສະບັບຮ່າງທີ 1: 30-11-2016

# ມາດຕະຖານນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍ 8: ລະບຽບການ ການປຸງແຕ່ງໄມ້ ແລະ ການຄ້າໄມ້

<table>
<tr><td colspan="3">ຫຼັກການ 8.1 ຂັ້ນຕອນ ແລະ ລະບຽບການ ໃນການປຸງແຕ່ງ ແລະ ການຄ້າໄມ້</td></tr>
<tr><td colspan="3">ມາດຖານ 8.1.1 ຜູ້ປະກອບການ ໄດ້ສ້າງຕັ້ງ ແລະ ໄດ້ຮັບການອະນຸມັດ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ</td></tr>
<tr><td>ຕົວຊີ້ວັດ 8.1.1.1 ຜູ້ປະກອບການ ປຸງແຕ່ງໄມ້ ໄດ້ມີໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນກິດຈະການໂຮງງານ, , ໃບຢັ້ງຢືນການເສຍອາກອນ ປະຈຳປີ ແລະ ໃບຢັ້ງຢືນສິ່ງແວດລ້ອມ ຢ່າງຖືກຕ້ອງ ທີ່ໄດ້ອອກໂດຍ ຂະແໜງການ ທີ່ກ່ຽວຂ້ອງ.</td><td colspan="2">ຕົວຢັ້ງຢືນ:<br>• ໃບອະນຸຍາດລົງທຶນ ອອກໃຫ້ໂດຍ ຂະແໜງການແຜນການ ແລະ ການລົງທຶນ (ຖ້າມີ)<br>• ໃບທະບຽນວິສາຫະກິດ<br>• ໃບຢັ້ງຢືນຕົວເລກຜູ້ເສຍອາກອນ<br>• ໃບຢັ້ງຢືນການເສຍອາກອນ ປະຈຳປີ<br>• ໃບອະນຸຍາດດຳເນີນກິດຈະການໂຮງງານ<br>• ໃບຢັ້ງຢືນສິ່ງແວດລ້ອມ (ອີງຕາມ ມາດຖານ 8.1.3)</td></tr>
<tr><td>ເອກະສານອ້າງອີງດ້ານນິຕິກຳ:<br>• ກົດໝາຍ ວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 48/ສພຊ. 27 ທັນວາ 2013<br>• ກົດໝາຍ ເລກທີ 02/ສພຊ. ກໍລະກົດ 2009<br>• ກົດໝາຍ ເລກທີ 11/ສພຊ ພະຈິກ 2005 (ມາດຕາ 12)<br>• ກົດໝາຍ ເລກທີ 04/ສພຊ. ທັນວາ 2011.<br>• ກົດໝາຍວ່າດ້ວຍສິ່ງແວດລ້ອມ ເລກທີ 29/ສພຊ. ທັນວາ 2012</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ຂະແໜງແຜນການ ແລະ ການລົງທຶນ<br>• ຂະແໜງອຸດສາຫະກຳ ແລະ ການຄ້າ<br>• ຂະແໜງການເງິນ<br>• ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ</td><td>ວິທີກວດກາຢັ້ງຢືນ<br>• ທົບທວນ ແລະ ກວດກາເອກສານ<br>• ສໍາພາດພະນັກງານທີ່ກ່ຽວຂ້ອງ</td></tr>
<tr><td colspan="3">ມາດຖານ 8.1.2 ຜູ້ປະກອບການ ໄດ້ປະຕິບັດຕາມ ຂັ້ນຕອນການປຸງແຕ່ງໄມ້ ແລະ ການຄ້າໄມ້ ທີ່ໄດ້ ກຳນົດຢູ່ໃນກົດ ໝາຍ ແລະ ລະບຽບການ</td></tr>
<tr><td>ຕົວຊີ້ວັດ 8.1.2.1 ຜູ້ປະກອບການ ທີ່ຊື້ໄມ້ ເຂົ້າໃນໂຮງງານ/ສະຖານທີ່ ເພື່ອປຸງແຕ່ງ ຕ້ອງໄດ້ບັນທຶກຢ່າງເປັນ</td><td colspan="2">ຕົວຢັ້ງຢືນ<br>• ໃບແຈ້ງລາຄາ ແລະ ບັນຊີໄມ້ ທີ່ມີແຫຼ່ງທີ່ມາຂອງໄມ້</td></tr>
</table>

<table>
<tr><td>ລະບົບ ແລະ ຄັດຕິດບັນດາເອກະສານດ້ານນິຕິກຳ ເພື່ອ ສາມາດຢັ້ງຢືນໄດ້ແຫຼ່ງທີ່ມາຂອງໄມ້.</td><td colspan="2">• ໃບຢັ້ງຢືນ ການຊຳລະຄ່າພັນທະໄມ້ ຈາກຂະແໜງການເງິນ (ຍົກເວັ້ນໄມ້ປູກ)<br>• ໃບຢັ້ງຢືນການເສຍອາກອນ (ໃບເກັບເງິນອາກອນມູນຄ່າເພີ່ມ)<br>• ເອກະສານແຫຼ່ງທີ່ມາຂອງໄມ້<br>• ບົດລາຍງານໄມ້ສິ້ນເຂົ້າ/ການຮັບໄມ້ເຂົ້າໂຮງງານຂອງຜູ້ປະກອບການ</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ຂໍ້ຕົກລົງ COC ໃໝ່ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ຂະແໜງການເງິນ<br>• ຂະແໜງອຸດສາຫະກຳ ແລະ ການຄ້າ<br>• ຂະແໜງກະສິກຳ ແລະ ປ່າໄມ້</td><td>ວິທີກວດກາຢັ້ງຢືນ<br>• ທົບທວນ ແລະ ກວດກາເອກສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ<br>• ກວດກາໃນພາກສະໜາມ</td></tr>
<tr><td>ຕົວຊີ້ວັດ 8.1.2.2 ຜູ້ປະກອບການ ໄດ້ບັນທຶກ ຂໍ້ມູນອັດຕາ ການນຳໃຊ້ໄມ້ ທັງໝົດ ໃນເວລາເລື່ອຍໄມ້ ຫຼື ປຸງແຕ່ງໄມ້ ເປັນຜະລິດຕະພັນໄມ້ ເພື່ອສາມາດ ນຳໃຊ້ເຂົ້າໃນການສົມທຽບຂໍ້ມູນ ໄມ້ສິ້ນເຂົ້າ ແລະ ໄມ້ສິ້ນອອກ ທີ່ເຂົ້າ ແລະ ອອກຈາກໂຮງງານຂອງຕົນ.</td><td colspan="2">ຕົວຢັ້ງຢືນ<br>• ບັນຊີຕົວເລກ ອັດຕາການນຳໃຊ້ໄມ້ ເປັນ %/m³ ຂອງໄມ້ແຕ່ລະທ່ອນ ທີ່ເລື່ອຍໃນໂຮງງານ<br>• ບັນຊີຕົວເລກ ອັດຕາການນຳໃຊ້ໄມ້ ເປັນ %/m³ ຂອງໄມ້ແປຮູບ ຫຼື ໄມ້ເຄື່ອງສຳເລັດຮູບ ທີ່ປຸງແຕ່ງມາເປັນໄມ້ສຳເລັດຮູບ.<br>• ຕົວເລກ ອັດຕາການນຳໃຊ້ໄມ້ສະເລັ່ຍ ທີ່ໄດ້ຄິດໄລ່ຈາກການດຳເນີນງານທັງໝົດ ໃນໂຮງງານ ເປັນ %/m3.</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ຂໍ້ຕົກລົງ COC ໃໝ່ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ພະແນກອຸດສາຫະກຳ ແລະ ການຄ້າ<br>• ຫ້ອງອຸດສາຫະ ກຳ ແລະ ການຄ້າເມືອງ</td><td>ວິທີການກວດກາຢັ້ງຢືນ<br>• ທົບທວນ ແລະ ກວດກາເອກສານ<br>• ສຳພາດຜູ້ອອກແຮງງານທີ່ກ່ຽວຂ້ອງ<br>• ກວດກາໃນພາກສະໜາມ</td></tr>
<tr><td>ຕົວຊີ້ວັດ 8.1.2.3 ຜູ້ປະກອບການ ໄດ້ດຳເນີນ ແລະ ແຍກໄມ້ເລື່ອຍຂອງຕົນ ໃຫ້ເປັນຊຸດໆ ທີ່ໄດ້ແຍກອອກເປັນກອງ ແລະ ມີເລກລະຫັດທີ່ ບົ່ງບອກເຖິງແຫຼ່ງທີ່ມາຂອງໄມ້.</td><td colspan="2">ຕົວຢັ້ງຢືນ<br>• ເລກທີ ຊຸດໄມ້ພາຍໃນ ຂອງໄມ້ແປຮູບ.<br>• ກອງໄມ້ແປຮູບ ແລະ ເລກລະຫັດແຫຼ່ງທີ່ມາຂອງໄມ້</td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ຂໍ້ຕົກລົງ COC ໃໝ່ ຂອງກະຊວງ ອຸດສາຫະກຳ ແລະ ການຄ້າ</td><td>ອົງການຈັດຕັ້ງຮັບຜິດຊອບ<br>• ກະຊວງອຸດສາຫະກຳ ແລະ ການຄ້າ.<br>• ພະແນກ ອຸດສາຫະກຳ ແລະ ການຄ້າ.</td><td>ວິທີການກວດກາຢັ້ງຢືນ<br>• ທົບທວນ ແລະ ກວດກາເອກສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ</td></tr>
</table>

| | | |
|---|---|---|
| | • ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ. | • ກວດກາໃນພາກສະໜາມ |
| ຕົວຊີ້ວັດ **8.1.2.4** ຜູ້ປະກອບການ ໄດ້ບັນທຶກ ຂໍ້ມູນ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຄ້າງໃນໂຮງງານ ຫຼື ໄດ້ຂາຍ ອອກຈາກໂຮງງານ ເພື່ອສາມາດນຳໃຊ້ຂໍ້ມູນນີ້ ໃນການ ແຈ້ງ ໄມ້ສິ້ນອອກ ແລະ ໄມ້ຄ້າງໃນໂຮງງານໄດ້ຢ່າງ ຖືກຕ້ອງ ໃຫ້ແກ່ຂະ ແໜງ ອຸດສາຫະກຳ ແລະ ການຄ້າ. | **ຕົວຢັ້ງຢືນ**<br>• ຂໍ້ມູນໄມ້ສິ້ນອອກ/ຂໍ້ມູນຜະລິດຕະພັນໄມ້ທີ່ຂາຍ ຫຼື ສົ່ງອອກ<br>• ຂໍ້ມູນ ໄມ້ ຫຼື ຜະລິດຕະພັນໄມ້ທີ່ຄ້າງໂຮງງານ<br>• ໃບເກັບເງິນຂາຍໄມ້ | |
| <u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ຂໍ້ຕົກລົງ COC ໃໝ່ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ | **ອົງການຈັດຕັ້ງຮັບຜິດຊອບ**<br>• ກະຊວງອຸດສາຫະກຳ ແລະ ການຄ້າ.<br>• ພະແນກ ອຸດສາຫະກຳ ແລະ ການຄ້າ.<br>• ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ. | **ວິທີການກວດກາຢັ້ງຢືນ**<br>• ທົບທວນ ແລະ ກວດກາ ເອກະສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ<br>• ກວດກາໃນພາກສະໜາມ |
| ຕົວຊີ້ວັດ **8.1.2.5** ຜູ້ປະກອບການ ປຸງແຕ່ງໄມ້ ໄດ້ສົ່ງບົດລາຍງານປະຈຳເດືອນກ່ຽວກັບ ໄມ້ສິ້ນເຂົ້າ, ໄມ້ສິ້ນອອກ ແລະ ໄມ້ຄ້າງສາງ ໃຫ້ຂະແໜງການ ອຸດສາຫະກຳ ແລະ ການຄ້າ ທີ່ກ່ຽວຂ້ອງ ເພື່ອຊາບ ແລະ ດຳເນີນຕາມຕິດຕາມກວດກາ ແລະ ລົງກວດກາໃນພາກສະໜາມ ຖ້າຕ້ອງການ. | **ຕົວຢັ້ງຢືນ**<br>• ບົດລາຍງານໄມ້ສິ້ນເຂົ້າປະຈຳເດືອນ ຂອງຜູ້ປະກອບການ<br>• ບົດລາຍງານໄມ້ສິ້ນອອກ ໄມ້ຄ້າງສາງ ປະຈຳເດືອນ ຂອງຜູ້ປະກອບການ | |
| <u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ຂໍ້ຕົກລົງ COC ໃໝ່ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ | **ອົງການຈັດຕັ້ງຮັບຜິດຊອບ**<br>• ກະຊວງອຸດສາຫະກຳ ແລະ ການຄ້າ.<br>• ພະແນກ ອຸດສາຫະກຳ ແລະ ການຄ້າ.<br>• ຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ. | **ວິທີການກວດກາຢັ້ງຢືນ**<br>• ທົບທວນ ແລະ ກວດກາ ເອກະສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ<br>• ກວດກາໃນພາກສະໜາມ |
| ຕົວຊີ້ວັດ **8.1.2.6** ຜູ້ປະກອບການ ໄດ້ຈ່າຍອາກອນທຸກຢ່າງ ໃນການ ດຳເນີນທຸລະກິດປຸງແຕ່ງໄມ້ ລວມທັງ ການຮັບໃບສຳລະ ແລະ ການຢັ້ງຢືນການຈ່າຍອາກອນ ຈາກຈະແໜງການເງິນ. | **ຕົວຢັ້ງຢືນ**<br>• ໃບບິນການຈ່າຍອາກອນລາຍໄດ້<br>• ໃບບິນການຈ່າຍອາກອນກຳໄລ<br>• ໃບສຳລະ ແລະ ການຢັ້ງຢືນການຈ່າຍອາກອນ ຈາກຈະແໜງການເງິນ | |
| <u>ເອກະສານອ້າງອີງດ້ານນິຕິກຳ:</u> | **ອົງການຈັດຕັ້ງຮັບຜິດຊອບ** | **ວິທີການກວດກາຢັ້ງຢືນ** |

| | | |
|---|---|---|
| • ກົດໝາຍ ເລກທີ 05/ສພຊ ທັນວາ 2011 | • ກະຊວງການເງິນ<br>• ພະແນກການເງິນ ແຂວງ ຫຼື ນະຄອນຫຼວງ | • ທົບທວນ ແລະ ກວດກາ ເອກສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ |
| **ມາດຖານ 8.1.3 ຜູ້ປະກອບການ ໄດ້ປະຕິບັດ ພັນທະທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຕາມກົດໝາຍ ແລະ ລຽບການ** | | |
| ຕົວຊີ້ວັດ 8.1.3.1 ຜູ້ປະກອບການ ປຸງແຕ່ງໄມ້ ໄດ້ ດຳເນີນການປະເມີນກະທົບ IEE ຫຼື ESIA ເຊິ່ງໄດ້ອະນຸມັດຈາກ ກຊສ. | **ຕົວຢັ້ງຢືນ**<br>• ບົດລາຍງານ IEE ຫຼື ESIA ແລະ ESMMP ໄດ້ຮ່າງໂດຍຜູ້ປະກອບການ ປຸງແຕ່ງໄມ້<br>• ໃບຢັ້ງຢືນສິ່ງແວດລ້ອມ ລວມທັງເງື່ອນໄຂ ທີ່ອອກໃຫ້ໂດຍ ກຊສ | |
| **ເອກະສານອ້າງອີງດ້ານນິຕິກຳ:**<br>• ກົດໝາຍ ເລກທີ 29/ສພຊ. ທັນວາ 2012<br>• ບົດແນະນຳເລກທີ 8029/ກຊສ. ທັນວາ 2013<br>• ບົດແນະນຳເລກທີ 8030/ກຊສ. ທັນວາ 2013 | **ອົງການຈັດຕັ້ງຮັບຜິດຊອບ**<br>• ກຊສ<br>• ພຊສ<br>• ຫຊສ | **ວິທີການກວດກາຢັ້ງຢືນ**<br>• ທົບທວນ ແລະ ກວດກາ ເອກສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ<br>• ກວດກາໃນພາກສະໜາມ |
| ຕົວຊີ້ວັດ 8.1.3.2 ຜູ້ປະກອບການ ໄດ້ຈັດຕັ້ງປະຕິບັດ ມາດຕະການຫຼຸດຜ່ອນຜົນກະທົບ ທີ່ໄດ້ກຳນົດໃນ ESMMP ແລະ ເງື່ອນໄຂຂອງໃບຢັ້ງຢືນສິ່ງແວດລ້ອມ. | **ຕົວຢັ້ງຢືນ**<br>• ບົດລາຍງານຈັດຕັ້ງປະຕິບັດ ESMMP ທີ່ຮ່າງ ໂດຍຜູ້ປະກອບການຜະລິດໄມ້<br>• ບົດລາຍງານ ການກວດກາ ການຈັດຕັ້ງປະຕິບັດ ESMMP ທີ່ຮ່າງໂດຍ ພະນັກງານ ພຊສ ຫຼື ກຊສ. | |
| **ເອກະສານອ້າງອີງດ້ານນິຕິກຳ:**<br>• ກົດໝາຍ ເລກທີ 29/ສພຊ. ທັນວາ 2012<br>• ບົດແນະນຳເລກທີ 8029/ກຊສ. ທັນວາ 2013<br>• ບົດແນະນຳເລກທີ 8030/ກຊສ. ທັນວາ 2013 | **ອົງການຈັດຕັ້ງຮັບຜິດຊອບ**<br>• ກຊສ<br>• ພຊສຂ<br>• ຫຊສມ | **ວິທີການກວດກາຢັ້ງຢືນ**<br>• ທົບທວນ ແລະ ກວດກາ ເອກສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ<br>• ກວດກາໃນພາກສະໜາມ |
| **ຫຼັກການ 8.2 ຂັ້ນຕອນ ແລະ ລະບຽບການ ໃນການສົ່ງອອກຜະລິດຕະພັນໄມ້** | | |
| **ມາດຖານ 8.2.1 ຜູ້ປະກອບການ ໄດ້ສະແດງຫຼັກຖານ ແລະ ຂໍ້ມູນ ດ້ານຜະລິດຕະພັນໄມ້ ຢ່າງຈະແຈ້ງ ຕາມກົດໝາຍ ແລະ ລະບຽບການ** | | |

<table>
<tr><td>ຕົວຊີ້ວັດ 8.2.1.1 ຜູ້ປະກອບການສົ່ງອອກໄມ້ ໄດ້ປະຕິບັດຕາມ ຜະລິດຕະພັນໄມ້ສຳລັບສົ່ງອອກ ຕາມກອບຜະລິດຕະພັນໄມ້ ແລະ ມາດຕະຖານຜະລິດຕະພັນໄມ້ ທີ່ລັດຖະບານໄດ້ກຳນົດ ແລະ ອະນຸຍາດໃຫ້ສົ່ງອອກ ແລະ ບໍ່ໄດ້ອະນຸຍາດໃຫ້ສົ່ງອອກ.</td><td colspan="2">ຕົວຢັ້ງຢືນ<ul><li>ບັນຊີຜະລິດຕະພັນໄມ້ ທີ່ປະກອບມີຂະໜາດ, ບໍລິມາດ ແລະ ຊື່ຊະນິດພັນໄມ້ ທີ່ອະນຸຍາດໃຫ້ສົ່ງອອກ</li></ul></td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u><ul><li>ຄຳສັ່ງ 15/ນຍ</li><li>ຂໍ້ຕົກລົງ ເລກທີ1833/ອຄ. 3 ຕຸລາ 2016</li><li>ຄຳສັ່ງແນະນຳ ເລກທີ 2143/ອຄ.ກຂອ. 25 ພະຈິກ 2016</li><li>ຂໍ້ຕົກລົງ COC ໃໝ່ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ</li></ul></td><td>ອົງການຈັດຕັ້ງຮັບຜິດຊອບ<ul><li>ຂະແໜງ ການເງິນ</li><li>ຂະແໜງ ອຸດສາຫະກຳ ແລະ ການຄ້າ</li><li>ຂະແໜງ ກະສິກຳ ແລະ ປ່າໄມ້.</li></ul></td><td>ວິທີການກວດກາຢັ້ງຢືນ<ul><li>ທົບທວນ ແລະ ກວດກາເອກສານ</li><li>ສຳພາດພະນັກງານທີ່ກ່ຽວ ຂ້ອງ</li><li>ກວດກາໃນພາກສະໜາມ</li></ul></td></tr>
<tr><td colspan="3">ມາດຖານ 8.2.2 ຜູ້ສົ່ງອອກໄມ້ ໄດ້ປະຕິບັດຕາມ ຂັ້ນຕອນທາງດ້ານພາສີ ໃນການສົ່ງອອກ ທີ່ໄດ້ ກຳນົດໃນ ກົດໝາຍ ແລະ ລະບຽບການ</td></tr>
<tr><td>ຕົວຊີ້ວັດ 8.2.2.1 ຜູ້ສົ່ງອອກຜະລິດຕະພັນໄມ້ ໄດ້ມີເອກະສານສົ່ງອອກທັງໝົດ ທີ່ກ່ຽວກັບ ຜະລິດຕະພັນໄມ້ສຳລັບສົ່ງອອກ.</td><td colspan="2">ຕົວຢັ້ງຢືນ<ul><li>ໃບແຈ້ງພາສີເປັນລາຍລະອຽດ</li><li>ໃບແຈ້ງລາຄາ</li><li>ໃບລາຍການຫຸ້ມຫໍ່</li><li>ໃບຢັ້ງຢືນຜະລິດຕະພັນໄມ້ເພື່ອສົ່ງອອກ</li><li>ໃບຢັ້ງຢືນສຸຂະອະນາໄມ (SPS)</li><li>ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (CO)</li><li>ໃບຮັບຮອງລະບົບ CoC?</li><li>ໃບອະນຸຍາດ FLEGT?</li></ul></td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u><ul><li>ກົດໝາຍເລກທີ. 05/ສພຊ. ທັນວາ 2011</li><li>ແຈ້ງການເລກທີ 1818/ຫສນຍ. ພະຈິກ 2016</li><li>ຄຳສັ່ງແນະນຳ ເລກທີ 2143/ອຄ.ກຂອ ພະຈິກ 2016</li><li>ຂໍ້ຕົກລົງ COC ໃໝ່ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ</li></ul></td><td>ອົງການຈັດຕັ້ງຮັບຜິດຊອບ<ul><li>ຂະແໜງ ການເງິນ</li><li>ຂະແໜງ ອຸດສາຫະກຳ ແລະ ການຄ້າ</li><li>ຂະແໜງ ກະສິກຳແລະ ປ່າໄມ້.</li></ul></td><td>ວິທີການກວດກາຢັ້ງຢືນ<ul><li>ທົບທວນ ແລະ ກວດກາເອກສານ</li><li>ສຳພາດພະນັກງານທີ່ກ່ຽວຂ້ອງ</li><li>ກວດກາໃນພາກສະໜາມ</li></ul></td></tr>
<tr><td>ຕົວຊີ້ວັດ 8.2.2.2 ຜູ້ສົ່ງອອກຜະລິດຕະພັນໄມ້ ມີສັນຍາຊື້ຂາຍ ກັບ ບໍລິສັດຕ່າງປະເທດ ແລະ ໂອນເງິນຜ່ານລະບົບທະນາຄານ ຂອງ ສປປ ລາວ.</td><td colspan="2">ຕົວຢັ້ງຢືນ<ul><li>ສັນຍາສົ່ງອອກ ເຊັ່ນລະຫ່ວາງຜູ້ສົ່ງອອກ ແລະ ບໍລິສັດຕ່າງປະເທດ</li><li>ຈົດທະບຽນສັນຍາຊື້-ຂາຍ</li><li>ໃບບິນໂອນເງິນຜ່ານທາງທະນາຄານ</li></ul></td></tr>
<tr><td><u>ເອກະສານອ້າງອີງດ້ານນິຕິກຳ:</u></td><td>ອົງການຈັດຕັ້ງຮັບຜິດຊອບ</td><td>ວິທີການກວດກາຢັ້ງຢືນ</td></tr>
</table>

| | | |
|---|---|---|
| • ຄຳສັ່ງແນະນຳ ເລກທີ 2143/ອຄ.ກຂອ ພະຈິກ 2016 | • ຂະແໜງການເງິນ<br>• ຂະແໜງອຸດສາຫະກຳ ແລະ ການຄ້າ | • ທົບທວນ ແລະ ກວດກາ ເອກະສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ |
| ຕົວຊີ້ວັດ 8.2.2.3 ຜູ້ສົ່ງອອກຜະລິດຕະພັນໄມ້ ປະຕິບັດຕາມມາດຕະຖານ ສຳລັບ ມາດຕະການດ້ານສຸຂາອະນາໄມຂອງພືດ ໃນເມື່ອມີການສົ່ງອອກໄມ້ໄປຕ່າງປະເທດ. | **ຕົວຢັ້ງຢືນ**<br>• ເອກະສານຢັ້ງຢືນ ການນຳເຂົ້າສົ່ງອອກພືດ<br>• ເອກະສານຢັ້ງຢືນ ການປອດສັດຕູພືດ ແລະ ພະຍາດ | |
| <u>ເອກະສານອ້າງອີງດ້ານນິຕິກຳ:</u> | **ອົງການຈັດຕັ້ງຮັບຜິດຊອບ**<br>• ກະຊວງກະສິກຳ ແລະ ປ່າໄມ້ | **ວິທີການກວດກາຢັ້ງຢືນ**<br>• ທົບທວນ ແລະ ກວດກາ ເອກະສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ |
| ມາດຖານ 8.2.3 **ຜູ້ສົ່ງອອກຜະລິດຕະພັນໄມ້ ປະຕິບັດຕາມລະບຽບການ ຂອງ CITES** | | |
| ຕົວຊີ້ວັດ 8.2.3.1 ຜູ້ສົ່ງອອກຜະລິດຕະພັນໄມ້ ທີ່ສົ່ງອອກໄມ້ ຫຼື ຜະລິດຕະພັນໄມ້ຫວງຫ້າມ ພາຍໃຕ້ລະບຽບການຂອງ CITES ໃຫ້ປະຕິບັດຕາມ ໃບອະນຸຍດ ແລະ ຂໍ້ບັງຄັບ ຂອງ CITES. | **ຕົວຢັ້ງຢືນ**<br>• ໜັງສືສະເໜີການສົ່ງອອກ ຂອງ CITES ສຳລັບ ສົ່ງອອກ, ນຳເຂົ້າ ແລະ ສົ່ງອອກໃໝ່ ຈາກ ກົມປ່າໄມ້<br>• ໃບອະນຸຍາດໃຫ້ສົ່ງອອກ, ນຳເຂົ້າ ແລະ ສົ່ງອອກໃໝ່ ຈາກ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຂອງ CITES ຂອງປະເທດ ທີ່ສົ່ງອອກ ແລະ ນຳເຂົ້າ. | |
| <u>ເອກະສານອ້າງອີງດ້ານນິຕິກຳ:</u><br>• ລະບຽບການ ເລກທີ. 0142/ກຊມ. 2009<br>• CITES ຕຸລາ 2009 (ມາດຕາ IV.9.2.2) | **ອົງການຈັດຕັ້ງຮັບຜິດຊອບ**<br>• ກົມກວດກາປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ | **ວິທີການກວດກາຢັ້ງຢືນ**<br>• ທົບທວນ ແລະ ກວດກາ ເອກະສານ<br>• ສຳພາດພະນັກງານທີ່ກ່ຽວຂ້ອງ<br>• ກວດກາໃນພາກສະໜາມ |